**23. ຮຸ້ນສາມັນແມ່ນຫຍັງ?**

ຮຸ້ນສາມັນ (Common Stock): ແມ່ນຜະລິດຕະພັນທາງການເງິນປະເພດທຶນ ທີ່ອອກໂດຍບໍລິສັດມະຫາຊົນ ທີ່ຕ້ອງການລະດົມທຶນຈາກປະຊາຊົນ, ຊຶ່ງຜູ່ຖື "ຮຸ້ນສາມັນ" ຈະມີຖານະເປັນເຈົ້າຂອງບໍລິສັດ, ມີສິດໃນການອອກສຽງລົງມະຕິໃນກອງປະຊຸມຜູ້ຖືຮຸ້ນ ຕາມອັດຕາສ່ວນຮ້ອຍ (%) ຂອງຮຸ້ນສາມັນ ທີ່ຕົນຖືຄອງຢູ່ ຫຼືເວົ້າອີກຢ່າງໜຶ່ງ ກໍ່ແມ່ນມີສິດເຂົ້າຮ່ວມເປັນຜູ້ຕັດສິນໃນບັນຫາສຳຄັນໃນກອງປະຊຸມຜູ່ຖືຮຸ້ນ ເປັນຕົ້ນແມ່ນ ການເພີ່ມທຶນ, ການຈ່າຍເງິນປັນຜົນ ຫຼື ການຄວບບໍລິສັດ ແລະ ອື່ນໆ. ນອກຈາກນີ້, ຜູ່ຖືຮຸ້ນສາມັນຍັງມີສິດໄດ້ຮັບເງິນປັນຜົນ ເມື່ອບໍລິສັດມີກຳໄລ, ມີໂອກາດໄດ້ຮັບກຳໄລ ຫຼື ຂາດທຶນ ຈາກສ່ວນຕ່າງຂອງລາຄາຮຸ້ນ ເມື່ອລາຄາຮຸ້ນດັ່ງກ່າວມີການປັບຕົວສູງຂຶ້ນ ຫຼື ຫຼຸດລົງ ພ້ອມທັງມີໂອກາດໄດ້ຮັບສິດໃນການຈອງຊື້ຮຸ້ນອອກໃໝ່ ໃນກໍລະນີທີ່ບໍລິສັດອອກຮຸ້ນເພີ່ມທຶນ ແລະ ສິດ ອື່ນໆອີກ.

ປະຈຸບັນຮຸ້ນສາມັນທີ່ຈົດທະບຽນ ແລະ ທຳການຊື້-ຂາຍຢູ່ຕະຫຼາດຫຼັກຊັບລາວ (ຕລຊລ) ປະກອບມີ 5 ບໍລິສັດ ຄື: ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ), ບໍລິສັດ ລາວເວີນ ມະຫາຊົນ (ລວມຊ), ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະ ຫາຊົນ (ປທລ) ແລະ ບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (ສ.ວ.ນ).